ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

3718 - - --

ກະຊວງສຶກສາທິການ ແລະ ກີລາ
ກົມແຜນການ ແລະ ການເງິນ

ເລກທີ: /ກຜງ
ນະຄອນຫລວງວຽງຈັນ, **ວັນທີ: 11** ສິງຫາ 2026

ໜັງສືເຊີນເຂົ້າຮ່ວມການສົມທຽບລາຄາ

ເຖິງ: _____

1. **ກະຊວງສຶກສາທິການ ແລະ ກີລາ**, ກົມແຜນການ ແລະ ການເງິນ ໄດ້ຮັບທຶນຊ່ວຍເຫຼືອລ້າ ຈາກໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ: ໂຄງການຮຽນຮູ້ ແລະ ຄວາມເທົ່າທຽມ (GPE III-LEAP) ພາຍໃຕ້ການຄຸ້ມຄອງຂອງທະນາຄານໂລກ ເພື່ອດຳເນີນການສົມທຽບລາຄາການຈັດພິມປຶ້ມຈຳນວນ 1 ລາຍການ ສະໜອງໃຫ້ກົມພັດທະນາຄູ ແລະ ການບໍລິຫານການສຶກສາ.
2. ກະຊວງສຶກສາທິການ ແລະ ກີລາ, ກົມແຜນການ ແລະ ການເງິນ, ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ **GPE III-LEAP** ຂໍເຊີນໂຮງພິມຂອງທ່ານເຂົ້າຍື່ນຊອງສົມທຽບລາຄາສະໜອງການຈັດພິມປຶ້ມຈຳນວນ 01 ລາຍການ, ໄລຍະເວລາໃນການສົ່ງມອບເຖິງສະຖານທີ່ແມ່ນ 30 ວັນ (ພາຍຫຼັງເຊັນສັນຍາ).
3. ການສົມທຽບລາຄານີ້ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນຳເພີ່ມເຕີມສຳລັບມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທີ 24 ມິຖຸນາ 2019. ບໍລິສັດ ຫຼື ໂຮງພິມທີ່ສົນໃຈເຊີນຕິດຕໍ່ເອົາຊອງສົມທຽບລາຄາ ນັບແຕ່ວັນທີ **11** ສິງຫາ 2026 – 25 ສິງຫາ 2026 ຕາມເວລາໂມງລັດຖະການ.
4. ຊອງສະເໜີລາຄາຈະຕ້ອງສົ່ງກ່ອນ ເວລາ 09:00 ໂມງ ຂອງວັນທີ **25** ສິງຫາ 2026 ແລະ ຊອງສະເໜີລາຄາທຸກໆຊອງຈະໄດ້ເປີດໃນເວລາ 09:05 ໂມງ ຂອງມື້ດຽວກັນ ໂດຍຊ່ອງໜ້າຄະນະກຳມະການ ແລະ ຜູ້ທີ່ຍື່ນຊອງຕາງໜ້າບໍລິສັດທີ່ສົນໃຈຢາກເຂົ້າຮ່ວມ ທີ່ຫ້ອງປະຊຸມຫ້ອງການປະສານງານສາກົນເພື່ອການສຶກສາ (ECU), ຊັ້ນ 3 ຕຶກ ICT, ກົມແຜນການ ແລະ ການເງິນ, ກະຊວງສຶກສາທິການ ແລະ ກີລາ. ສະຖານທີ່ຖະໜົນລ້ານຊ້າງ, ຕຶກ ICT ຊັ້ນ 3, ຕູ້ ປນ. 067 ໂທ/ແຟັກ: (+865 21) 243672; ອີເມວ: ecudp.laopdr@moes.edu.la

ຫົວໜ້າກົມ

ອະນຸແພງ ແກ້ວວົງສາ